ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໂຍທາທິການ ແລະ ຂົນສົ່ງ
ກົມການບິນພົນລະເຮືອນ

ເລກທີ: 0873 /ຍທຂ.ກບພຮ
ລົງວັນທີ: 01 APR 2019

# ການແບ່ງຄວາມຮັບຜິດຊອບ ວຽກງານວິຊາສະເພາະຕາມທິດສາມສ້າງ ລະຫວ່າງ ກົມການບິນພົນລະເຮືອນ ກັບ ພະແນກ ຍທຂ ແຂວງ ແລະ ນະຄອນຫຼວງວຽງຈັນ

| ກົມການບິນພົນລະເຮືອນຮັບຜິດຊອບ | ພະແນກ ຍທຂ ແຂວງ ແລະ ນະຄອນຫລວງວຽງຈັນ ຮັບຜິດຊອບ |
|---|---|
| 1) ຄົ້ນຄວ້າຫັນແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ກໍ່ຄື ກະຊວງໂຍທາທິການ ແລະ ຂົນສົ່ງ ກ່ຽວກັບວຽກງານການບິນ ໃນຂອບເຂດທົ່ວປະເທດ ໃຫ້ກາຍເປັນແຜນຍຸດທະສາດ, ແຜນແມ່ບົດ, ແຜນການ, ແຜນງານ ແລະ ໂຄງການອັນລະອຽດ ເພື່ອຈັດຕັ້ງປະຕິບັດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ; | 1) ຜັນຂະຫຍາຍຂໍ້ຕົກລົງ, ຄໍາສັ່ງແນະນໍາ, ລະບຽບການ ແລະ ຂໍ້ກໍານົດມາດຖານເຕັກນິກ ແລະ ລະບຽບການຂອງກົມການບິນພົນລະເຮືອນ (ກ່ຽວກັບວຽກງານສາມສ້າງ) ທີ່ວາງອອກ; |
| 2) ຮ່າງນະໂຍບາຍດ້ານວຽກງານການບິນ, ກົດໝາຍ, ລະບຽບການ, ກໍານົດໝາຍ ແລະ ຂໍ້ກໍານົດມາດຕະຖານເຕັກນິກ ກ່ຽວກັບວຽກງານການບິນພົນລະເຮືອນ ພ້ອມທັງໂຄສະນາ ເຜີຍແຜ່ຢ່າງກວ້າງຂວາງ ທັງພາຍໃນ ແລະ ສາກົນ ພ້ອມທັງແບ່ງຂັ້ນຄຸ້ມຄອງໃຫ້ທ້ອງຖິ່ນ ໃຫ້ຂາດຕົວຕາມທິດສາມສ້າງ; | 2) ສໍາຫຼວດຂໍ້ມູນກ່ຽວກັບຈຸດພິກັດລະບົບ (WGS 84) ຂອງສິ່ງປຸກສ້າງ, ແລວເສົາໄຟຟ້າແຮງສູງ, ໂທລະສັບ, ໂທລະພາບ/ວິທະຍຸຕ່າງໆ ໃຫ້ສອດຄ່ອງຕາມມາດຕະຖານ ແລະ ລະບຽບການຂອງກົມການບິນວາງອອກ ເພື່ອພິຈາລະນາອະນຸມັດ; |
| 3) ຕິດຕາມ ແລະ ກວດກາ ການເຄື່ອນໄຫວຮອບດ້ານຂອງວິຊາການ, ບໍລິສັດການບິນ ແລະ ຜູ້ປະກອບການທຸລະກິດການບິນ ກ່ຽວກັບຄວາມປອດໄພ ແລະ ປ້ອງກັນຄວາມປອດໄພການບິນຮອບດ້ານ; | 3) ເປັນເຈົ້າການປະສານງານ ກັບອົງການທ້ອງຖິ່ນ ໃນການຄຸ້ມຄອງທຸກໆກິດຈະການຂອງສັງຄົມ ທີ່ຈະສົ່ງຜົນກະທົບໂດຍກົງກັບຄວາມປອດໄພຂອງການບິນ; |
| 4) ປະເມີນຜົນ, ປະສານງານ ແລະ ຊຸກຍູ້ ພະແນກ ຍທຂ ແຂວງ ແລະ ນະຄອນຫຼວງວຽງຈັນ, ໃນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ ການບິນພົນລະເຮືອນ, ລະບຽບການ, ມາດຕະຖານເຕັກນິກໃຫ້ຖືກຕ້ອງ ແລະ ໄດ້ຮັບຜົນດີ; | 4) ເປັນເຈົ້າການໄກ່ເກ່ຍ ໂດຍມີສ່ວນຮ່ວມຂອງ ກອງວິຊາການ/ຫ້ອງການວິຊາການປະຈໍາແຂວງ ທຸກບັນຫາທີ່ເກີດຂຶ້ນ ທີ່ໄດ້ກໍານົດໄວ້ໃນຂໍ້ 3; |
| 5) ຝຶກອົບຮົມພະນັກງານວິຊາການ ເພື່ອສ້າງຄວາມເຂັ້ມແຂງ ໃນການຄຸ້ມຄອງຂະແໜງການບິນພົນລະເຮືອນ; | 5) ສະຫຼຸບລາຍງານ ການຈັດຕັ້ງປະຕິບັດ ໃຫ້ອົງການປົກຄອງທ້ອງຖິ່ນ ແລະ ກົມການບິນພົນລະເຮືອນ ທຸກໆ 6 ເດືອນ ແລະ ປະຈໍາປີ. |

| | |
|---|---|
| 6 ) ພັດທະນາລະບົບໂຄງລ່າງພື້ນຖານ ຂະແໜງການບິນແບບຍືນຍົງ ເປັນມິດກັບສິ່ງແວດລ້ອມ, ຕາມທິດທັນເປັນສີຂຽວ, ຄຸ້ມຄອງສິ່ງກີດຂວາງ ອ້ອມຮອບສະໜາມບິນ, ມົນລະພິດທາງອາກາດ, ແຫຼ່ງນ້ຳ ແລະ ອາຫານ ທີ່ດຶງດູດສັດ, ແສງສະທ້ອນ, ສີ, ສຽງ, ໄຟເຄື່ອງໝາຍຄວາມສູງ, ການຈູດບັ້ງໄຟປະເພນີ ແລະ ກິດຈະກຳດ້ານການບິນ (ວ່າວ, ໂຄມໄຟລອຍ, ບານລູນ, ເຮືອບິນບໍ່ມີຄົນຂັບ, ປາຣາໂມເຕີ) ອ້ອມຮອບສະໜາມບິນ; | 6) ສະກັດກັ້ນ ແລະ ເກືອດຫ້າມທຸກການປຸກສ້າງ, ການດັດແປງຕໍ່ເຕີມຄວາມ ສູງ, ຄຸ້ມຄອງສິ່ງກີດຂວາງອ້ອມຮອບສະໜາມບິນ, ມົນລະພິດທາງອາກາດ, ແຫຼ່ງນ້ຳ ແລະ ອາຫານ ທີ່ດຶງດູດສັດ, ແສງສະທ້ອນ, ສີ, ສຽງ, ໄຟເຄື່ອງໝາຍຄວາມສູງ, ການຈູດບັ້ງໄຟປະເພນີ ແລະ ກິດຈະກຳດ້ານການບິນ (ວ່າວ, ໂຄມ ໄຟລອຍ, ບານລູນ, ເຮືອບິນບໍ່ມີຄົນຂັບ, ປາຣາໂມເຕີ) ອ້ອມຮອບສະໜາມບິນ ແລະ ມີລະບົບລາຍງານເຖິງກົມການບິນຢ່າງທັນເວລາ; |
| 7) ແຈ້ງໃຫ້ກອງວິຊາການ, ບໍລິສັດສາຍການບິນ, ຜູ້ປະກອບການ ກອງທັບອາກາດ, ອົງການປົກຄອງທ້ອງຖິ່ນ ກ່ຽວກັບການນຳໃຊ້ບັນດາເສັ້ນທາງບິນ, ວົງຈອນບິນຂຶ້ນ-ລົງ ໃນນ່ານຟ້າ ແລະ ສະໜາມບິນ/ເດີ່ນບິນ ທົ່ວປະເທດ. | 7) ຜັນຂະຫຍາຍລະບຽບການ ກ່ຽວກັບຄວາມປອດໄພການບິນ ແລະ ຄຸ້ມຄອງບັນດາສິ່ງກີດຂວາງ ຕາມແລວທາງ ຂຶ້ນ-ລົງ ສະໜາມບິນ. |

ຫົວໜ້າກົມ ການບິນພົນລະເຮືອນ

ວັນເພັງ ຈັນທະພອນ

ຫົວໜ້າພະແນກ

ຫົວໜ້າພະແນກ ຍທຂ ນະຄອນຫຼວງວຽງຈັນ: ....................................

ຫົວໜ້າພະແນກ ຍທຂ ແຂວງ ຜົ້ງສາລີ : ....................................

ຫົວໜ້າພະແນກ ຍທຂ ແຂວງ ຫຼວງນ້ຳທາ : ....................................

ຫົວໜ້າພະແນກ ຍທຂ ແຂວງ ອຸດົມໄຊ : ....................................

ຫົວໜ້າພະແນກ ຍທຂ ແຂວງ ບໍ່ແກ້ວ : ....................................

ຫົວໜ້າພະແນກ ຍທຂ ແຂວງ ຫຼວງພະບາງ : ....................................

ຫົວໜ້າພະແນກ ຍທຂ ແຂວງ ຊຽງຂວາງ : ....................................

ຫົວໜ້າພະແນກ ຍທຂ ແຂວງ ຫົວພັນ : ....................................

ຫົວໜ້າພະແນກ ຍທຂ ແຂວງ ໄຊຍະບູລີ : ....................................

ຫົວໜ້າພະແນກ ຍທຂ ແຂວງ ວຽງຈັນ : ....................................

ຫົວໜ້າພະແນກ ຍທຂ ແຂວງ ໄຊສົມບູນ : ....................................

ຫົວໜ້າພະແນກ ຍທຂ ແຂວງ ບໍລິຄຳໄຊ : ....................................

ຫົວໜ້າພະແນກ ຍທຂ ແຂວງ ຄຳມ່ວນ : ....................................

ຫົວໜ້າພະແນກ ຍທຂ ແຂວງ ສະຫວັນນະເຂດ: ....................................

ຫົວໜ້າພະແນກ ຍທຂ ແຂວງ ຈຳປາສັກ : ....................................

ຫົວໜ້າພະແນກ ຍທຂ ແຂວງ ສາລະວັນ : ....................................

ຫົວໜ້າພະແນກ ຍທຂ ແຂວງ ເຊກອງ : ....................................

ຫົວໜ້າພະແນກ ຍທຂ ແຂວງອັດຕະປື : ....................................